ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ ---604---/ກສຂ.ຈສ

ແຂວງຈຳປາສັກ, ວັນທີ 17.3.2026

# ແຈ້ງການ

ເຖິງ: ບັນດາບໍລິສັດ ດຳເນີນທຸລະກິດການກໍ່ສ້າງພາຍໃນ ແຂວງຈຳປາສັກ

ເລື່ອງ: ການປະມູນໂຄງການວຽກງານຈັດສັນພູມລຳເນົາ ແລະ ປ່ອນທຳມາຫາກິນໃຫ້ແກ່ປະຊາຊົນ ຢູ່ຈຸດສຸມທົ່ງຕາຕາກ ເມືອງມູນລະປາໂມກ ແຂວງຈຳປາສັກ ປະຈຳປີ 2026.

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ, ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015
- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການປົກຄອງແຂວງ ຈຳປາສັກ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງຈຳປາສັກ ເລກທີ 219/ຄປຂ.ຈສ, ລົງວັນທີ 12/03/2026
- ອີງຕາມ ແຈ້ງການແນະນຳ ເພີ່ມຕື່ມ ກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ ຂອງລັດ ໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ສູນກາງຄຸ້ມຄອງປີ 2026 ເລກທີ 0603/ກພຫຼ, ລົງວັນທີ 11/03/2026

ເພື່ອເຮັດໃຫ້ວຽກງານການລົງທຶນຂອງລັດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ ແລະ ມີຄວາມໂປ່ງໃສ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ ຂໍຖືເປັນກຽດແຈ້ງການມາຍັງບັນດາບໍລິສັດ ທີ່ດຳເນີນທຸລະກິດການກໍ່ສ້າງພາຍໃນແຂວງຈຳປາສັກ ທີ່ມີຄວາມສົນໃຈເຂົ້າຮ່ວມໃນການປະມູນລາຄາໂຄງການ ປະຈຳປີ 2026 ໂດຍການລົງທຶນຂອງລັດ ເຊິ່ງລາຍລະອຽດໂຄງການມີດັ່ງລຸ່ມນີ້:

1). ໂຄງການບຸກເບີກ ເນື້ອທີ່ທຳການຜະລິດ (ຕອນທີ 2 ແລະ 3)ໃນເຂດຈັດສັນພູມລຳເນົາ ບ້ານກ້ານເຫຼືອງ ຈຸດສຸມທົ່ງຕາຕາກ, ເມືອງມູນລະປາໂມກ ແຂວງຈຳປາສັກ

2). ໂຄງການ ກໍ່ສ້າງເສັ້ນທາງຕາຜ້າ ບ້ານທ່າກົ້ງ, ບ້ານຫີນລາດ ແລະ ບ້ານກ້ານເຫຼືອງ ໃນເຂດຈັດສັນພູມລຳເນົາ ຈຸດສຸມທົ່ງຕາຕາກ, ເມືອງມູນລະປາໂມກ ແຂວງຈຳປາສັກ

ຖ້າບໍລິສັດຂອງທ່ານມີຄວາມສົນໃຈຕິດຕໍ່ພົວພັນໄດ້ທີ່ ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ ຕາມໂມງລັດຖະການ.

ສ່ວນວັນເປີດຊອງປະມູນ ແມ່ນວັນທີ 20/4/2026 ເວລາ 8:30 ໂມງ, ທີ່ ຫ້ອງປະຊຸມ ພະແນກກະສິກຳ ແລະ ສິ່ງແວດລ້ອມ.

สแกนด้วย CamScanner

ເງື່ອນໄຂໃນການເຂົ້າຮ່ວມການປະມູນລາຄາ ມີດັ່ງນີ້:

1. ຕ້ອງມີໃບອະນຸຍາດດຳເນີນທຸລະກິດການກໍ່ສ້າງ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນ ເຊິ່ງເປັນບໍລິສັດທີ່ໄດ້ມອບພັນທະອາກອນໃຫ້ລັດຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍ.

2. ເປັນບໍລິສັດທີ່ສາມາດລົງທຶນກ່ອນ 100% ໃນໂຄງການໃຫ້ສຳເລັດ ແລະ ຕ້ອງມີໃບຢັ້ງຢືນຖານະການເງິນຈາກທະນາຄານ.

3. ເປັນບໍລິສັດທີ່ມີປະສົບການ, ມີຄຸນສົມບັດດີ, ມີຄວາມຈິງໃຈໃນການຈັດຕັ້ງປະຕິບັດ ແລະ ຕ້ອງຮັບປະກັນການກໍ່ສ້າງໃຫ້ຖືກຕ້ອງຕາມມາດຖານເຕັກນິກການກໍ່ສ້າງຂອງ ສປປ ລາວ.

4. ບໍລິສັດຕ້ອງນຳສະເໜີ ລາຄາໃນທຸກໆລາຍການທີ່ມີໃນບໍລິມາດວຽກງານຂອງໂຄງການ ແລະ ມີລາຄາລວມແຕ່ລະລາຍການຖືກຕ້ອງຄົບຖ້ວນ.

5. ມູນຄ່າລາຄາໃນມື້ເປີດຊອງປະມູນບໍລິສັດທີ່ໄດ້ທີ 1 ແມ່ນຕ້ອງຜ່ານຄະນະກຳມະການກວດກາບັນດາເງື່ອນໄຂ, ບັນດາເອກະສານອ້າງອີງຖືກຕ້ອງຄົບຖ້ວນ ຕາມຂໍ້ກຳນົດທຸກໆປະການຈຶ່ງວ່າຊະນະ ການປະມູນໄດ້.

6. ບໍລິສັດທີ່ໄດ້ປະກາດໃຫ້ເປັນຜູ້ຊະນະການປະມູນ, ຕ້ອງໄດ້ສ້າງບົດບັນທຶກສັນຍາຮ່ວມກັບເຈົ້າຂອງໂຄງການບໍ່ໃຫ້ກາຍ 15 ວັນ, ຕ້ອງມີເງິນຄ້ຳປະກັນສັນຍາ 10%, ຫຼັງຈາກເຊັນສັນຍາແລ້ວ ແລະ ຕ້ອງຈ່າຍເງິນບໍລິຫານ, ຕິດຕາມໂຄງການໃຫ້ເຈົ້າຂອງໂຄງການຕາມແຜນການເຄື່ອນໄຫວຕິດຕາມໃນແຕ່ລະຄັ້ງ, ເພື່ອນຳໃຊ້ເຂົ້າໃນການຕິດຕາມພາກສະໜາມ.

7. ສ່ວນການຊຳລະເງິນໂຄງການແມ່ນອີງໃສ່ສະພາອະນຸມັດງົບປະມານໃນແຕ່ລະປີ ( ລາຍລະອຽດແມ່ນຢູ່ໃນສັນຍາ)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຜູ້ທີ່ສົນໃຈເຂົ້າຮ່ວມໃນການປະມູນຄັ້ງນີ້ດ້ວຍ.

ຫົວໜ້າພະແນກ

ຄຳ ນິລາວົງ

ບ່ອນສົ່ງ:

- ບັນດາບໍລິສັດດຳເນີນທຸລະກິດການກໍ່ສ້າງພາຍໃນແຂວງ
- ຕິດຕໍ່ພົວພັນ: ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ(ພະແນກ ກສຂ) ທ.ຂັນແກ້ວ ວິໄລວົງ 020 98457444

สแกนด้วย CamScanner